ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===✡✡✡✡✡✡✡===

ແຂວງຊຽງຂວາງ

ທີ່ວ່າການປົກຄອງແຂວງ

ເລກທີ່ 05 / ຈຂ,ຊຂ

ຊຽງຂວາງ,ວັນທີ່ 17 / 02 / 2012

# ຄໍາສັ່ງແນະນໍາ

## ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມທົ່ວແຂວງ ຊຽງຂວາງ.

ເຖິງ: ບັນດາ ທ່ານເຈົ້າເມືອງໃນທົ່ວແຂວງ,ພະແນກການ,ກອງບັນຊາການປກຊ-ປກສແຂວງ ກົມກອງທະຫານຫຼວງ,ອົງການຈັດຕັ້ງພາກລັດ-ພາກເອກະຊົນທົ່ວແຂວງຊຽງຂວາງ.

ເລື່ອງ: ການຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມຕ້ານປະກົດການຫຍໍ້ທໍ້ທົ່ວແຂວງຄັ້ງທີ່ I ວັນທີ່ 7 ທັນວາ 2011.

- ອີງຕາມ ຄໍາສັ່ງຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ສະບັບເລກທີ່ 27/ນຍ ລົງວັນທີ່ 5 / 10 / 2011 ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນແລະແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ.
- ອີງຕາມ ເນື້ອໃນຈິດໃຈກອງປະຊຸມສະກັດກັ້ນແລະຕ້ານປະກົດການຫຍໍ້ທໍ້ທົ່ວແຂວງຊຽງຂວາງຄັ້ງທີ່ I ເປີດຂຶ້ນໃນວັນທີ່ 7/ 12 / 2011 ທີ່ສະໂມສອນໃຫຍ່ຫ້ອງວ່າການປົກຄອງແຂວງຊຽງຂວາງ.

ຜ່ານການດໍາເນີນກອງປະຊຸມສະກັດກັ້ນແລະຕ້ານປະກົດການຫຍໍ້ທໍ້ທົ່ວແຂວງຊຽງຂວາງຄັ້ງທີ່ I ພວກເຮົາສາມາດສະຫຼຸບສັງລວມໄດ້ບັນດາກໍລະນີປະກົດການຫຍໍ້ທໍ້ທີ່ເຄີຍເກີດຂຶ້ນຢູ່ແຂວງຊຽງຂວາງໃນປະຈຸບັນມີ13 ກໍລະນີທີ່ຈະຕ້ອງໄດ້ພ້ອມກັນແກ້ໄຂ.

ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມດັ່ງກ່າວໃຫ້ເປັນຮູບປະທໍາ , ແກ້ໄຂປະກົດການຫຍໍ້ທໍ້ທີ່ພົ້ນເດັ່ນເກີດຂຶ້ນໃນສັງຄົມທຸກໆກໍລະນີໃຫ້ໄດ້ຮັບຜົນດີແນໃສ່ຮັບປະກັນສະຖຽນລະພາບທາງດ້ານການເມືອງ,ຄວາມປອດໄພເປັນລະບຽບຮຽບຮ້ອຍໃນສັງຄົມທົ່ວແຂວງຊຽງຂວາງ ມີຄວາມໜັກແໜ້ນ , ເຮັດໃຫ້ການພັດທະນາເສດຖະກິດ - ສັງຄົມ ປະສົບຜົນສໍາເລັດ ແລະ ບັນລຸຕາມຄາດໝາຍທີ່ໄດ້ບັນລຸໄວ້.

ເຈົ້າແຂວງແຂວງຊຽງຂວາງ ອອກຄຳສັ່ງແນະນຳມອບຄວາມຮັບຜິດຊອບໃຫ້ແຕ່ລະພາກສ່ວນເພື່ອຈັດຕັ້ງປະຕິບັດແກ້ໄຂແຕ່ລະກໍລະນີດັ່ງນີ້:

I. ດ້ານແນວຄິດຊີ້ນຳ

1. ການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມໃຫ້ຖືເປັນຄວາມຮັບຜິດຊອບທາງການເມືອງແມ່ນພັນທະໜ້າທີ່ຂອງທົ່ວພັກ , ທົ່ວກຳລັງປະກອບອາວຸດແລະ ທົ່ວປວງຊົນລາວບັນດາເຜົ່າຊາວຊຽງຂວາງ.

2. ປະກົດການຫຍໍ້ທໍ້ເກີດຂື້ນຢູ່ໃນຂົງເຂດວຽກງານໃດ, ການຈັດຕັ້ງໃດ, ພາກລັດ -ພາກເອກະຊົນໃດແມ່ນການຈັດຕັ້ງສາຍຕັ້ງທີ່ກ່ຽວຂ້ອງຕ້ອງເປັນເຈົ້າການແກ້ໄຂເປັນຫຼັກ,ປະສານນຳຂະແໜງການທີ່ກ່ຽວຂ້ອງ ແລະ ຂໍຄຳເຫັນຊີ້ນຳຈາກຂັ້ນເທິງເປັນສຳຄັນ.

**II. ການແກ້ໄຂເປັນແຕ່ລະກໍລະນີ.**

1. ບັນຫາລະເມີດຂຸດຄົ້ນແຮ່ຄຳຊະຊາຍ ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່, ພະແນກແຜນການ ແລະ ການລົງທຶນຂອງແຂວງເປັນເຈົ້າການແກ້ໄຂຢ່າງມີຄວາມຮັບຜິດຊອບສູງສາກ່ອນ,ຫຼັງຈາກນັ້ນຈຶ່ງປະສານສົມທົບກັບເຈົ້າໜ້າທີ່ ປກຊ- ປກສແຂວງ, ອຳນາດການປົກຄອງເມືອງແລະບ້ານເປັນຜູ້ແກ້ໄຂ.

2. ບັນຫາຄະດີຂີ້ລັກງັດແງະ, ຊິງຊັບພົນລະເມືອງ, ຄາດຕະກຳແລະ ຄະດີອື່ນໆມອບໃຫ້ກອງບັນຊາການປກສແຂວງ,ປກສເມືອງຊີ້ນຳພາກສ່ວນວິຊາສະເພາະສືບສວນ - ສອບສວນແລະປກສ ກຸ່ມບ້ານເຮັດໜ້າທີ່ຂອງຕົນຢ່າງຕັ້ງໜ້າພ້ອມກັນສົມທົບກັບພາກສ່ວນທີ່ກ່ຽວຂ້ອງ , ອຳນາດການປົກຄອງທຸກຂັ້ນເປັນຜູ້ແກ້ໄຂຕາມຂັ້ນຕອນຂອງລະບຽບກົດໝາຍ.

3. ບັນຫາລົດເຖື່ອນ, ລົດບໍ່ມີເອກະສານ, ລົດຊື້ຂາຍຖືກຕ້ອງແຕ່ບໍ່ມີປ້າຍທະບຽນ, ມອບໃຫ້ກອງບັນຊາການ ປກສ ແຂວງ, ໂຍທາທິການ ແລະ ຂົນສົ່ງ , ພາສີເຂດ // ເປັນເຈົ້າການແກ້ໄຂເປັນຕົ້ນຕໍ,ບັນດາຂະແໜງການແຕ່ລະຂັ້ນແລະພະນັກງານ, ທະຫານ - ຕຳຫຼວດ ແລະປະຊາຊົນລາວ - ຊາວຕ່າງປະເທດຢູ່ແຂວງຊຽງຂວາງໃຫ້ຮ່ວມມືຢ່າງເປັນເຈົ້າການຈຶ່ງຈະແກ້ໄຂຂາດຕົວໄດ້.

4. ການຕັດໄມ້ຊະຊາຍ ແລະ ຂົນສົ່ງໄມ້ລະເມີດລະບຽບກົດໝາຍມອບໃຫ້ຂະແໜງກະສິກຳປ່າໄມ້, ອຸດສາຫະກຳ ແລະ ການຄ້າຂັ້ນແຂວງ - ຂັ້ນເມືອງເປັນເຈົ້າການແກ້ໄຂຢ່າງຕັ້ງໜ້າສາກ່ອນ.ຫຼັງຈາກນັ້ນຈຶ່ງປະສານສົມທົບນຳພາກສ່ວນກ່ຽວຂ້ອງແລະ ຂໍຄຳເຫັນຊີ້ນຳຈາກຂັ້ນເທິງຕາມຄວາມເໝາະສົມຕໍ່ແຕ່ລະກໍລະນີ.

5. ບັນຫາອຸປະຕິເຫດ,ການລະເມີດລະບຽບກົດໝາຍຈະລາຈອນຕາມທ້ອງທະໜົນຫຼວງ ມອບໃຫ້ກອງບັນຊາການ ປກສແຂວງ, ພະແນກໂຍທາທິການແຂວງເປັນເຈົ້າການຊີ້ນໍາວຽກ ງານວິຊາສະເພາະຂອງຕົນເພື່ອມີມາດຕະການແກ້ໄຂເຮັດໃຫ້ອຸປະຕິເຫດລຸດລົງເທື່ອລະກ້າວ. ພ້ອມກັນນັ້ນບັນດາພະແນກການ,ກົມກອງທະຫານຫຼວງ- ທະຫານທ້ອງຖິ່ນ,ອໍານາດ ການປົກຄອງແຕ່ລະຂັ້ນ ຕະຫຼອດຮອດປະຊາຊົນບັນດາເຜົ່າຕ້ອງໄດ້ໃຫ້ການຮ່ວມມືຢ່າງ ກ້ວາງຂວາງ ແລະ ເຂັ້ມງວດ.

6. ການມົ່ວສຸມສິ່ງເສບຕິດມອບໃຫ້ ກອງບັນຊາການ ປກສ ແຂວງ,ປກສເມືອງ,ປກສກຸ່ມ ບ້ານ,ພະແນກ ສາທາລະນະສຸກແຂວງ, ອໍານາດການປົກຄອງເມືອງ ແລະ ກຸ່ມບ້ານ - ບ້ານ ເປັນຜູ້ຮັບຜິດຊອບແກ້ໄຂເປັນຕົ້ນຕໍ.

7. ບັນຫາຂໍ້ຂັດແຍ່ງກ່ຽວກັບທີ່ດິນມອບໃຫ້ຫ້ອງການທີ່ດິນແຂວງ,ພະແນກໂຍທາທິການ ແຂວງສົມທົບກັບພາກສ່ວນທີ່ກ່ຽວຂ້ອງຮັບຜິດຊອບແກ້ໄຂເປັນຕົ້ນຕໍ.

8. ແຮງງານເຖື່ອນຂອງຕ່າງປະເທດທີ່ເຄື່ອນໄຫວຢູ່ແຂວງຊຽງຂວາງມອບໃຫ້ກອງບັນຊາ ການ ປ ກ ສ ແຂວງ , ຂະແໜງຈັດຫາງານ ພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ,ສວຍສາອາກອນແຂວງ,ຫ້ອງວ່າການປົກຄອງແຂວງ,ພະແນກອຸດສາຫະກໍາແລະການ ຄ້າແຂວງ,ພະແນກຖະແຫຼງຂ່າວວັດທະນະທໍາແລະທ້ອງທ່ຽວແຂວງເປັນຜູ້ຮັບຜິດຊອບແກ້ ໄຂເປັນຕົ້ນຕໍ.

9. ການຮັກສາສະພາບແວດລ້ອມ,ຮັກສາຄວາມສະອາດຢູ່ຕົວເມືອງໂພນສະຫວັນແລະ ເມືອງອື່ນໆມອບໃຫ້ພະແນກຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ,ອົງການອພປຕ ແລະອໍານາດການປົກຄອງຂອງແຕ່ລະເມືອງຮັບຜິດຊອບແກ້ໄຂເປັນຕົ້ນຕໍ.

10. ບັນຫາຮ້ານບັນເທີງ , ສາລາເບຍ ,ໂຕະສະນຸກເກີ , ຕູ້ເກມ, ການຕິດປ້າຍໂຄສະນາ ຕ່າງໆມອບໃຫ້ພະແນກຖະແຫຼງຂ່າວວັດທະນະທໍາ -ທ້ອງທ່ຽວແຂວງ,ພະແນກສຶກສາ -ກິລາ ແຂວງສົມທົບກັບອໍານາດການປົກຄອງເມືອງຮັບຜິດຊອບແກ້ໄຂເປັນຕົ້ນຕໍ.

11. ບັນຫາໂສເພນີມອບໃຫ້ຫ້ອງການຊາວໜຸ່ມ- ສະຫະພັນແມ່ຍິງແຂວງ ແລະ ເມືອງ, ພະແນກສາທາແຂວງ,ສົມທົບກັບອໍານາດການປົກຄອງແຕ່ລະເມືອງ,ແຕ່ລະກຸ່ມບ້ານ-ບ້ານ ເປັນຜູ້ແກ້ໄຂເປັນຕົ້ນຕໍ.

12. ເດັກປະລະການຮຽນ,ໂດດຫ້ອງໃນໂມງຮຽນມອບໃຫ້ພະແນກສຶກສາ-ກິລາ,ອໍານາດ ການປົກຄອງແລະຜູ້ປົກຄອງເດັກຮັບຜິດຊອບແກ້ໄຂເປັນຕົ້ນຕໍ.

13. ການສວຍໃຊ້ໜ້າທີ່ຕຳແໜ່ງຂອງພະນັກງານ ພັກ - ລັດຈຳນວນໜຶ່ງ ເພື່ອຜົນປະໂຫຍດສ່ວນຕົວໃນທາງບໍ່ຊອບທຳ , ມອບໃຫ້ການຈັດຕັ້ງກ່ຽວຂ້ອງ ເປັນເຈົ້າການແກ້ໄຂເປັນກົກ.ອົງການກວດກາພັກ - ລັດຂອງແຂວງ, ຂອງເມືອງເປັນສຳຄັນ, ຖ້າກໍລະນີຮ້າຍແຮງຕ້ອງເຂັ້ມງວດແກ້ໄຂຕາມລະບຽບກົດໝາຍທີ່ກຳນົດໄວ້.

ເມື່ອໄດ້ຮັບຄຳສັ່ງແນະນຳສະບັບນີ້ແລ້ວ ໃຫ້ແຕ່ລະພາກສ່ວນ ເປັນເຈົ້າການຈັດຕັ້ງປະຕິບັດດ້ວຍຄວາມຮັບຜິດຊອບສູງເຮັດໃຫ້ການແກ້ໄຂບັນດາປະກົດການຫຍໍ້ທໍ້ຕ່າງໆ ຢູ່ທົ່ວແຂວງຊຽງຂວາງ ຫຼຸດລົງເທື່ອລະກ້າວ.

ເຈົ້າແຂວງ,ແຂວງຊຽງຂວາງ

ປອ.ດຣ ສິນກິດ ມັງໜໍເມກ